# ເສັ້ງຕົ້ນບົດທີ 1

1. ໂປໂລແລະພະເຢຊູເປັນຊາດໃດ? ____________________
2. ຊາດຢິວນັ້ນສືບຕໍ່ລົງມາຈາກໃຜ? ____________________
3. ໃນພະຄຳພີ ຄົນໃດທີ່ບໍ່ເປັນຊາດຢິວ ເອີ້ນວ່າຢ່າງໃດ? ____________________

# ເສັ້ງປາຍບົດທີ 1

1. ພະເຈົ້າຈະໃຫ້ຊາດໃດແດ່ຮັບພະພອນທາງອັບລາຮາມ? ____________________
2. ກ. ພະເຈົ້າສັນຍາວ່າທຸກຊາດຈະຮັບພະພອນໂດຍທາງໃຜ? ____________________

   ຂ. ຄຳສັນຍານັ້ນສຳເລັດໃນຜູ້ໃດ? ____________________

   ຄ. ແມ່ນໃຜທີ່ປະກາດພະທຳເລື່ອງພະພອນນັ້ນໃຫ້ທຸກຊາດ? ____________________
3. ທັງສາມຄົນ (ໃນຄຳຖາມ 2) ເປັນຊາດໃດ? ____________________
4. ໂປໂລໄປແຂວງໃດ ເພື່ອທຳອິດທີ່ອອກໄປປະກາດ? ____________________

# ເສັ້ງຫຼັງປະຊຸມບົດທີ 1

*(ທຸກຂໍ້ຕໍ່ໄປນີ້ ໃຫ້ຕອບວ່າ "ໂປໂລ" ຫຼື "ຜູ້ສອນບໍ່ຈິງ" ຫຼື ທັງສອງ)*

1. ແມ່ນໃຜທີ່ພະເຈົ້າໃຊ້ມາ? ____________________
2. ແມ່ນໃຜທີ່ເຮັດໃຫ້ພີ່ນ້ອງໃນຄາລາເຕຍຫວຸ້ນວາຍ? ____________________
3. ແມ່ນໃຜທີ່ເດີນທາງໄປຄາລາເຕຍ? ____________________
4. ແມ່ນໃຜທີ່ປະກາດຂ່າວປະເສີດແທ້? ____________________
5. ແມ່ນໃຜທີ່ປະກາດຂ່າວປະເສີດປອມ? ____________________
6. ແມ່ນໃຜທີ່ຈະຖືກປ້ອຍດ່າ? ____________________

# ເສັ້ງຕົ້ນບົດທີ 2

1. ໂປໂລມີສອງຊື່.

   ກ. ເມື່ອເກີດໃນສາສະໜາຢິວ ພໍ່ແມ່ໃສ່ຊື່ຫຍັງ? ____________________

   ຂ. ເມື່ອຈະອອກໄປປະກາດກັບຄົນຕ່າງຊາດ ເພິ່ນໃສ່ຊື່ຫຍັງ? ____________________
2. ໂຊໂລເກີດໃນເມືອງໃດ? ____________________
3. ໂປໂລຮັບພິທີໃດເມື່ອອາຍຸ 8 ມື້? ____________________
4. ເມື່ອຍັງເປັນເດັກນ້ອຍໂຊໂລເຂົ້າສຶກສາຢູ່ບ່ອນໃດ? ____________________
5. ຮຽນຫຍັງ? ____________________
6. ໂຊໂລມັກອ່ານເລື່ອງພໍ່ເດີມຂອງຊາດຢິວຄືໃຜ? ____________________

## ເສັ້ງປາຍບົດທີ 2

1. ອັບລາຮາມເຊື່ອພະເຈົ້າ ທີ່ຈະໄດ້ຮັບສອງປະການໃດ? ___________________________
2. ໃນສະໄໝນັ້ນດິນແດນນັ້ນເອີ້ນວ່າຢ່າງໃດ? ___________________________
3. ກ. ລູກຂອງອັບລາຮາມທີ່ພະເຈົ້າສັນຍາໄວ້ນັ້ນຊື່ຫຍັງ? ___________________________
   ຂ. ແມ່ຂອງລູກຊາຍນັ້ນຊື່ຫຍັງ? ___________________________
4. ກ. ໃນເມື່ອອີຊາກຍັງບໍ່ໃຫຍ່ເທື່ອ ພະເຈົ້າທົດລອງຄວາມເຊື່ອຂອງອັບລາຮາມຢ່າງໃດ? ___
   ___________________________
   ຂ. ອັບລາຮາມຍອມຖະຫວາຍບໍ່? ___________________________
   ຄ. ພະເຈົ້າຫາຫຍັງບູຊາແທນ? ___________________________

## ເສັ້ງຫຼັງປະຊຸມບົດທີ 2

1. ກ. ໃນ ຄລຕ 3:6-9 ພະເຈົ້າໃຫ້ຄຳສັນຍາກັບອັບລາຮາມວ່າ ຈະຄືນດີກັບພະເຈົ້າໂດຍທາງໃດ? ___________________________
   ຂ. ທ່ານຂີດກ້ອງຄຳທີ່ກ່າວເລື່ອງການເປັນຄົນຊອບທຳ ໃນ ຄລຕ ບົດ 3 ຂໍ້ໃດແດ່? (ເປີດເບິ່ງພະຄຳພີທີ່ທ່ານໝາຍໄວ້ກໍໄດ້) ___________________________
   ___________________________
2. ກ. ໂປໂລຍົກຊື່ຂອງໃຜໃນພະຄຳພີເດີມທີ່ເປັນຕົວຢ່າງໃນຄວາມເຊື່ອ? ______________
   ຂ. ໃນ ຄລຕ 3:6-9 ເຫັນຊື່ຂອງອັບລາຮາມຈັກເທື່ອ? ___________________________
4. ກ. ຕາມຮູບ ໜ້າ 24 ເສື້ອເປື້ອນສະແດງເຖິງຫຍັງ? ___________________________
   ຂ. ເສື້ອສີຂາວສະແດງເຖິງຄວາມຊອບທຳທີ່ເຮົາຮັບມາຈາກໃຜ? ______________

## ເສັ້ງຕົ້ນບົດທີ 3

1. ກ. ເມືອງຕາໄຊຢູ່ແຂວງໃດ? ____________________

   ຂ. ໂປໂລຮຽນອາຊີບໃດໃນເມືອງຕາໄຊ? ____________________
2. ດິນແດນຂອງຊາວຢິວໃນສະໄໝໂປໂລນັ້ນເອີ້ນວ່າຫຍັງ? ____________________
3. ໂປໂຊໄປຮຽນເລື່ອງສາສະໜາຢິວໃນກຸງໃດ? ____________________
4. ປະເທດໃດ? ____________________
5. ກ. ພະເຢຊູຢູ່ໃນປາແລັດສະຕິນ ຍຸກດຽວກັນກັບໂປໂລບໍ່? ____________________

   ຂ. ເຂົາຮູ້ຈັກກັນບໍ່? ____________________

6. ໃຫ້ເບິ່ງແຜນທີ່ຂ້າງຂວານີ້:




   ກ. ຕົວອັກສອນໃດໝາຍເຖິງຕາໄຊ? ____________________

   ຂ. ຕົວອັກສອນໃດໝາຍເຖິງເຢລູຊາເລັມ? ____________________

## ເສັ້ງປາຍບົດທີ 3

1. ອາຈານທີ່ສອນໂຊໂລເລື່ອງສາສະໜາຢິວຊື່ຫຍັງ? ____________________
2. ແມ່ນໃຜທີ່ຈົດພະບັນຍັດໄວ້ ຫຼັງຈາກອັບລາຮາມ 430 ປີ? ____________________
3. ທີ່ໂຊໂລຮຽນນັ້ນ ຮຽນບັນຍັດໃດເປັນຕົ້ນ? ____________________
4. ມີຄົນໃດທີ່ຈະໄດ້ລອດໂດຍຖືພະບັນຍັດຂອງໂມເຊ? ____________________
5. ກ. ມີອັນໃດມາທາງພະບັນຍັດຂອງໂມເຊ? ____________________

   ຂ. ອັນໃດມາທາງຄວາມເຊື່ອຂອງອັບລາຮາມ? ____________________
6. ມີອັນໃດເປັນເຄື່ອງກີດກັ້ນບໍ່ໃຫ້ຄົນບາບມາເຖິງພະເຈົ້າ? ____________________

## ເສັ້ງຫຼັງປະຊຸມບົດທີ 3

1. ພະບັນຍັດຂອງໂມເຊມີປະໂຫຍດສອງຢ່າງຄືຢ່າງໃດ?

   ____________________ ແລະ ____________________
2. ໃຫ້ເປີດພະຄຳພີອ່ານ ຄາລາເຕຍ 3:19-29.

   ກ. ຂໍ້ໃດບອກວ່າພະບັນຍັດຄວບຄຸມເຮົາໄວ້? ____________________

   ຂ. ຂໍ້ໃດບອກວ່າ ພະບັນຍັດປົກຄອງນຳພາເຮົາເຖິງພະຄຼິດມາ? ____________________

3. ໃຫ້ທ່ານຍົກຂໍ້ພະຄຳພີເດີມ ທີ່ບອກວ່າພະບັນຍັດຊີ້ບອກເຖິງພະເຢຊູ? _______________

_______________________________________________________________

4. ໃຫ້ທ່ານຍົກຂໍ້ທີ່ພະເຢຊູກ່າວອ້າງຈາກໂມເຊ ທີ່ເປັນຫຼັກຖານວ່າ ພະເຢຊູເປັນພະຜູ້ຊ່ວຍ? __

_______________________________________________________________

## ເສັ້ງຕົ້ນບົດທີ 4

1. ຄາລາລີເອັນເຂົ້າພວກໃດໃນສາສະໜາຢິວ? _______________________________
2. ກ. ໂຊໂລຢູ່ພວກໃດ? _____________________________________________
   ຂ. ພວກຟາລິຊາຍເຂົ້າຂ້າງພະເຢຊູ ຫຼືເປັນສັດຕູ? __________________________
3. ກ. ເຄື່ອງກີດກັ້ນບໍ່ໃຫ້ພະພອນຂອງພະເຈົ້າມາເຖິງຄົນທີ່ບໍ່ເປັນຊາດຢິວມີສອງປະການໃດ?
   ___________________________ ແລະ ______________________________
   ຂ. ແມ່ນພວກໃດໃນສາສະໜາຢິວ ທີ່ມັກເນັ້ນເລື່ອງສອງປະການນັ້ນ? _______________

   _____________________________________________________________

## ເສັ້ງປາຍບົດທີ 4

1. ເຫັນຊື່ຂອງໂຊໂລສາມເທື່ອທຳອິດໃນບົດແລະຂໍ້ໃດ? (ໃຫ້ເບິ່ງໃນພະຄຳພີທີ່ຂີດສີຟ້າກ້ອງຊື່ນັ້ນ)

   _____________________________________________________________

2. ພວກຜູ້ນຳໃນສາສະໜາຢິວ ຄວ່າງຫີນຂ້າໃຜ? ______________________________
3. ກ. ແມ່ນຜູ້ໃດທີ່ເຫັນດີໃນການນັ້ນ ແລະເຝົ້າເສື້ອຂອງຄົນທີ່ຂ້າຊະເຕຟາໂນ? __________

   _____________________________________________________________

   ຂ. ແມ່ນໃຜພະຍາຍາມທຳລາຍຄຼິດສະຕະຈັກຢ່າງຮຸນແຮງ? _____________________
4. ຄົນທີ່ຈະເຂົ້າໃນແຜ່ນດິນຂອງພະເຈົ້າ ຈຳເປັນຕ້ອງຜ່ານຫຍັງ? ____________________

   _____________________________________________________________

## ເສັ້ງຫຼັງປະຊຸມບົດທີ 4

1. ໃຫ້ເປີດເບິ່ງຮູບໜ້າ 53. ໃຫ້ອ່ານ ຄລຕ 3:10-14
   ກ. ແມ່ນສອງພວກໃດທີ່ຖືກປ້ອຍດ່າ? _____________________________________
   ______________________________ ແລະ ___________________________
   ຂ. ຮູບຂ້າງຊ້າຍສະແດງເຖິງພວກໃດ? ____________________________________
   ຄ. ຮູບໃດສະແດງເຖິງພະເຢຊູທີ່ຖືກແຂວນໄວ້ທີ່ໄມ້ກາງແຂນ? ___________________
2. ເມື່ອພະເຢຊູຖືກແຂວນໄວ້ທີ່ໄມ້ກາງແຂນ ພະອົງໄຖ່ເຮົາຈາກຫຍັງ? _______________

   _____________________________________________________________

3. ໂປໂລກ່າວເລື່ອງນີ້ໃນສອງຂໍ້ໃດ? (ເບິ່ງໃນພະຄຳພີທີ່ທ່ານຂີດສີແດງອ້ອມກໍໄດ້)

_______________________________ ແລະ ______________________________

## ເສັ້ງຕົ້ນບົດທີ 5

1. ໂຊໂລເດີນທາງຈະໄປໃສ ເມື່ອເຫັນພະເຢຊູ? ________________________________
2. ຫຼັງຈາກພົບພະເຢຊູ ຕາຂອງໂຊໂລເປັນຢ່າງໃດ? ______________________________
3. ໂຊໂລມີແຜນການຈະເຮັດຫຍັງໃນດາມາເຊ? ________________________________
4. ມີເຄື່ອງກີດກັ້ນສອງປະການໃດ ລະຫວ່າງໂປໂລກັບຄຣິດສະຕຽນທົ່ວໄປ?

   ________________________________ ແລະ ______________________________
5. ກີດກັ້ນໃນສອງດ້ານໃດ? ______________________________________________
6. ເມື່ອໂປໂລກັບໃຈໃໝ່ ເຄື່ອງກີດກັ້ນນັ້ນເປັນຢ່າງໃດ? ___________________________

## ເສັ້ງປາຍບົດທີ 5

1. ພະເຈົ້າໃຊ້ໃຜມາເພື່ອໃຫ້ໂຊໂລເຫັນຮຸ່ງອີກ? __________________________________

   ຂ. ແມ່ນໃຜທີ່ເລືອກໂຊໂລໄວ້ໃຫ້ປະກາດຂ່າວປະເສີດແກ່ຄົນຕ່າງຊາດ? ____________
3. ໂຊໂລຢູ່ໃນເຂດດາມາເຊແລະອາລະເບຍຈັກປີ? ________________________________
4. ໂຊໂລໜີຈາກສັດຕູໃນດາມາເຊຢ່າງໃດ? ____________________________________

   ______________________________________________________________
5. ແມ່ນໃຜແນະນຳໂຊໂລໃຫ້ຮູ້ຈັກພວກສາວົກໃນກຸງເຢລູຊາເລັມ? ___________________
6. ໂຊໂລຢູ່ກັບເຂົ້າໃນກຸງເຢລູຊາເລັມຈັກອາທິດ? ________________________________
7. ໂຊໂລໜີຈາກສັດຕູໃນກຸງເຢລູຊາເລັມໄປໃສ? _________________________________

## ເສັ້ງຫຼັງປະຊຸມບົດທີ 5

1. ກ. ພະເຈົ້າໃຫ້ຄຳສັນຍາແກ່ອັບລາຮາມ 430 ປີກ່ອນພະບັນຍັດໃຫ້ໂມເຊ. ພະອົງສັນຍາຫຍັງ?

   ____________________________________________________________

   ຂ. ເຫັນໃນຄາລາເຕຍບົດ 3 ຂໍ້ ໃດ? _____________________________________
2. ປະເທດທີ່ພະເຈົ້າສັນຍາໄວ້ໃນໂລກນີ້ຄືການາອານ. ເມືອງຖາວອນທີ່ປະເສີດກວ່ານັ້ນອີກຄື ເມືອງໃດ? ____________________________________________________

# ເສັ້ງຕົ້ນບົດທີ 6

1. ກ. ພາກທຳອິດໃນຊີວິດຂອງໂຊໂລ ບ້ານເພິ່ນຢູ່ໃສ? ____________________________
   ຂ. ໃນພາກນັ້ນເພິ່ນລົງໄປກຸງເຢລູຊາເລັມຈັກເທື່ອ? ____________________________
2. ກ. ເທື່ອໃດທີ່ໂຊໂລເຫັນເຂົາຂ້າຊະເຕຟາໂນໃນກຸງເຢລູຊາເລັມ? __________________
   ຂ. ເທື່ອໃດທີ່ໄປຢູ່ກັບເປໂຕ 15 ມື້? ________________________________________
   ຄ. ເທື່ອໃດທີ່ໂຊໂລເຂົ້າໂຮງຮຽນຂອງຄາມາລີເອັນ) _____________________________
3. ກ. ໂຊໂລເກີດໃນເມືອງໃດ? _______________________________________________
   ຂ. ຮັບພິທີຕັດໃນເມືອງໃດ? _______________________________________________
   ຄ. ເລີ້ມຮຽນໃນໂຮງທຳໃນເມືອງໃດ? ________________________________________
   ງ. ຮຽນໃນໂຮງຮຽນຂອງຄາມາລີເອັນໃນບ່ອນໃດ? ____________________________
   ຈ. ຢູ່ກຸງໃດທີ່ພະເຢຊູສິ້ນພະຊົນແລະຄືນພະຊົນ? _____________________________
   ສ. ໂຊໂລຢູ່ໃສທີ່ເຫັນຊະເຕຟາໂນຕາຍ? __________________________________
   ຊ. ເດີນທາງໄປໃສເມື່ອເຫັນພະເຢຊູ? ____________________________________
   ຍ. ຢູ່ໃນທີ່ອານາເນຍອ້ອນວອນໃຫ້ເຫັນເປັນປົກກະຕິ? __________________________
   ດ. ໂຊໂລຮັບບັບຕິສະມາຢູ່ໃສ? _______________________________________
   ຕ. ໄປຫາບ່ອນສະງົບຢູ່ໃສ? _________________________________________
   ຖ. ພີ່ນ້ອງເອົາໂຊໂລໃສ່ກວຍຢ່ອນລົງຕາມປ່ອງກຳແພງໃນເມືອງໃດ? _______________
   ທ. ຢູ່ໃສທີ່ຢູ່ກັບເປໂຕສອງອາທິດ? ____________________________________
   ນ. ກ່ອນຈະອອກໄປປະກາດພະທຳເພິ່ນລໍຖ້າ 10 ປີ ຢູ່ໃສ? _______________________
4. ກ. ໂຊໂລລໍຖ້າ ແລະ ສະແຫວງຫາການຊົງນຳຈາກພະເຈົ້າທັງໃນປະເທດອາລະເບຍ ແລະ ເມືອງຕາໂຊ ຈັກປີກ່ອນອອກໄປປະກາດພະທຳ? ____________________________
   ຂ. ຮັບການແນະນຳຈາກເປໂຕຈັກອາທິດ? ___________________________________

## ເສັ້ງປາຍບົດທີ 6

1. ມີຄວາມສະດວກສາມປະການໃດ ໃນເມື່ອໂປໂລຈະອອກໄປປະກາດ?

______________________________________________________________

______________________________________________________________

______________________________________________________________

2. ກ. ເຈົ້າຈັກກະພັດໂລມຢູ່ໃນກຸງໃດ? ______________________________

   ຂ. ໂຊໂລເດີນທາງໄປຕາມທະເລໃດສ່ວນຫຼາຍ? ______________________

   ຄ. ຈັກກະພັດໂລມສ້າງຫຍັງເພື່ອຈະຂົນສິ່ງງ່າຍ? ____________________

3. ກ. ໃນແຜ່ນທີ່ນີ້ເລກໃດໝມຍຕາໂຊໂລໄວ້? _________________________

   ຂ. ເລກໃດໝາຍເຢລູຊາເລັມໄວ້? ______________________________

   ຄ. ເລກໃດໝາຍທະເລເມດີແຕຣາເນ? ____________________________

   ງ. ເລກໃດໝາຍເມືອງອັນຕີໂອເຂຍ? _____________________________

   ຈ. ເລກໃດໝາຍກຸງໂລມ? ____________________________________




## ເສັ້ງຫຼັງປະຊຸມບົດທີ 6

1. ຕັ້ງແຕ່ ຄາລາເຕຍ 3:29 ເຖິງ 4:7 ໂປໂລຍົກເລື່ອງຜູ້ຮັບມໍລະດົກຫຼືເຈົ້າຂອງມໍລະດົກ 3 ເທື່ອທີ່ທ່ານໝາຍໄວ້ແລ້ວ ຄືຂໍ້ໃດແດ່?

   ________________  ________________ ແລະ ________________

2. ອີກຂໍ້ໜຶ່ງບອກວ່າພະອົງໄຖ່ໃຫ້ພວກເຮົາໄດ້ຖານະເປັນບຸດຄືຂໍ້ໃດ? ____________

3. ໂປໂລບອກວ່າ ເມື່ອຄົບກຳນົດແລ້ວ ພະເຈົ້າໃຊ້ໃຜມາ? __________________

4. ກ. ເມື່ອພະເຢຊູໄຖ່ບາບເຮົາໄວ້ເຮົາຢູ່ໃນຖານະໃດ? ____________________

   ຂ. ມີສິດຮັບຫຍັງ? ____________________________________

# ເສັ້ງຕົ້ນບົດທີ 7




1. ຕາມໃນແຜ່ນທີ່ຂ້າງຂວານີ້ ໂຊໂລລໍຖ້າຢູ່ບ່ອນໃດ ຫຼາຍປີກ່ອນຈະໄປປະກາດພະທຳ (ເລືອກຕົວ ອັກສອນ) ____________________
2. ໂຊໂລລໍຖ້າບ່ອນນັ້ນຈັກປີ? ________________
3. ເມືອງນັ້ນຄືເມືອງໃດ? ____________________
4. ອັກສອນໃດໝາຍບ່ອນທີ່ມີການປະກາດພະທຳແກ່ຄົນຕ່າງຊາດກ່ອນ? ____________________
5. ຄືເມືອງໃດ? ____________________
6. ແມ່ນໃຜເອົາໂຊໂລມາຊ່ວຍປະກາດໃນເມືອງ ນັ້ນ?

__________________________________

# ເສັ້ງປາຍບົດທີ 7

1. ໂຊໂລກັບໝູ່ໄປຊ່ວຍພີ່ນ້ອງທີ່ອຶດຢາກຢູ່ໃສ? ______________________________
2. ຄຣິດສະຕຽນຄົນຕ່າງຊາດຄົນໜຶ່ງທີ່ເດີນທາງກັບເຂົາຈາກເມືອງອັນຕີໂອເຂຍຊື່ຫຍັງ? _____
3. ຄຣິດສະຕຽນແປກປອມຢາກບັງຄັບໃຫ້ຕີໂຕຮັບພິທີໃດ? ________________________
4. ຜູ້ນຳຄຣິດສະຕະຈັກໃນກຸງເຢລູຊາເລັມບັງຄັບໃຫ້ຕີໂຕຮັບບໍ່? ____________________
5. ເຂົາຍອມຮັບວ່າໂຊໂລເປັນຜູ້ປະກາດພະທຳໃຫ້ຄົນຕ່າງຊາດບໍ່? __________________

# ເສັ້ງຫຼັງປະຊຸມບົດທີ 7

1. ກ. ໂຊໂລສະເໜີເລື່ອງສິ່ງກີດກັ້ນລະຫ່ວາງ 3 ຄູ່ໃນຄາລາເຕຍບົດ 3 ຂໍ້ໃດ? __________

   ຂ. ໃຫ້ບອກທັງ 3 ຄູ່: ____________________ ແລະ ____________________

   ____________________ ແລະ ____________________

   ____________________ ແລະ ____________________

   ຄ. ທີ່ຈະທຳລາຍເຄື່ອງກີດກັ້ນນັ້ນຈະເປັນໄປໄດ້ບໍ່? ________________________

   ງ. ໄດ້ຢ່າງໃດ? ______________________________________________

2. ກ. ທ່ານເອງເຄີຍລຳບາກສິ່ງໃດທີ່ເປັນເຄື່ອງກີດກັ້ນລະຫວ່າງທ່ານກັບຄົນອື່ນບໍ່? ________

   ຂ. ມີອັນໃດ? ______________________________________________

   ຄ. ທ່ານຈະລົງມືເຮັດຢ່າງໃດຈຶ່ງຈະແກ້ໄຂໄດ້? ____________________________

# ເສັ້ງຕົ້ນບົດທີ 8

1. ທີ່ໂຊໂລອອກເດີນທາງໄປປະກາດເທື່ອທຳອິດ ເພິ່ນຈາກຄຣິດສະຕະຈັກໃດໄປ? ________
2. ສອງຄົນໃດໄປນຳ? ______________________ ແລະ ______________________
3. ຕາມພາສາໂລມ ໂຊໂລຊື່ຫຍັງ? ________________________________________
4. ເພິ່ນເລີ້ມໃສ່ຊື່ໂປໂລນັ້ນຢູ່ບ່ອນໃດ? ____________________________________
5. ໂປໂລອາຍຸປະມານຈັກປີ ວາລາອອກໄປປະກາດເທື່ອທຳອິດນັ້ນ? ________________
6. ເຂົາແວະເກາະໃດກ່ອນ? ____________________
7. ແມ່ນໃຜທີ່ຮັບເຊື່ອຢູ່ເກາະນັ້ນ? ________________
8. ແມ່ນໃຜຕໍ່ຕ້ານ? __________________________
9. ໝໍເວດມົນນັ້ນຖືກໂທດຢ່າງໃດ? _______________
10. ກ. ບ່ອນໃດໝາຍໄວ້ໂດຍຕົວເລກ 1? ___________
    ຂ. ບ່ອນໃດໝາຍໄວ້ໂດຍຕົວເລກ 2? ___________




# ເສັ້ງປາຍບົດທີ 8

1. ໂປໂລອອກໄປປະກາດພະທຳເທື່ອທຳອິດ ແລ້ວກັບມາລາຍງານຕໍ່ຄຣິດສະຕະຈັກໃດ? ____
2. ໃນເທື່ອທຳອິດນັ້ນ ເພິ່ນໄປປະກາດໃນແຂວງໃດ? ______________________________
3. ຕັ້ງຄຣິດສະຕະຈັກ ຈັກບ່ອນໃນແຂວງນັ້ນ? ___________________________________
4. ເມື່ອເດີນທາງໄປ ເຂົາແວະເກາະໃດ? ______________________________________
5. ເດີນທາງດິນປານໃດກ່ອນກັບມາ? _________________________________________
6. ໂປໂລອາຍຸປະມານຈັກປີ ເວລາເລີ່ມຕົ້ນອອກໄປປະກາດ? ______________________
7. ຜູ້ທີ່ໄປກັບໂປໂລຄາວໜຶ່ງແລ້ວໜີໄປຊື່ຫຍັງ? ____________________________
8. ຜູ້ທີ່ເດີນທາງໄປເຖິງທີ່ສຸດຊື່ຫຍັງ? _________________________________________
9. ແມ່ນໃນເມືອງໃດທີ່ເຂົາຕັ້ງຄຣິດສະຕະຈັກແລກ? __________________________
10. ໃນເມືອງນັ້ນໂປໂລເລີ້ມເທດສະໜາບ່ອນໃດ? ___________________________
11. ແມ່ນພວກໃດທີ່ມາຮັບເຊື່ອ? ___________________________________________

    ກ. ຊາດຢິວຢ່າງດຽວ　　　　ຂ. ຄົນຕ່າງຊາດຢ່າງດຽວ

    ຄ. ທັງຊາດຢິວແລະຄົນຕ່າງຊາດ　　ງ. ບໍ່ມີໃຜຮັບເຊື່ອ

12. ແມ່ນພວກໃດທີ່ຕໍ່ຕ້ານບໍ່ໃຫ້ເຂົາປະກາດ? ___________________________________
13. ເມື່ອໂປໂລກັບມາຢ້ຽມເຂົາເທື່ອທີສອງ ເພິ່ນເລືອກຕັ້ງຄົນໃດໃຫ້ເປັນຜູ້ນຳ ໃນຄຣິດສະຕະຈັກເຫຼົ່ານັ້ນ? _________________________________________________________

## ເສັງຫຼັງປະຊຸມບົດທີ 8

1. ມີຂໍ້ມູນບາງຢ່າງທີ່ບໍ່ເຫັນລາຍງານໃນພະທຳກິດຈະການ.
   ກ. ໃນ ຄລຕ 5:8-20 ເຫັນວ່າໂປໂລທຸກຍາກຢ່າງໃດ? ___________________________
   ຂ. ສະເພາະໃນຂໍ້ໃດ? ___________________________________________________
2. ກ. ໂປໂລບອກວ່າເພິ່ນເຈັບປວດເພາະພວກພີ່ນ້ອງ ເໝືອນຫຍັງ? __________________
   ຂ. ຄຳປຽບທຽບນັ້ນເຫັນໃນຂໍ້ໃດ? __________________________________________
3. ອີງຕາມໃນຕອນພະຄຳພີນັ້ນ
   ກ. ທ່າທີ່ຂອງພີ່ນ້ອງຕໍ່ຜູ້ນຳຄວນເປັນຢ່າງໃດ? _________________________________
   ຂ. ທ່າທີ່ຂອງຜູ້ນຳຕໍ່ພີ່ນ້ອງຄຣິດສະຕຽນຄວນເປັນຢ່າງໃດ? _________________________

## ເສັງຕົ້ນບົດທີ 9

1. ເຖິງວ່າໂປໂລອາດຈະເທດສະໜາຫຼາຍເທື່ອໃນແຂວງຄາລາເຕຍກໍຕາມ ແຕ່ພະຄຳພີລາຍງານແຕ່ເທື່ອດຽວ.
   ກ. ລາຍງານເລື່ອງຄຳເທດສະໜາໃນເມືອງໃດ? _________________________________
   ຂ. ເທດສະໜາໃນອາຄານໃດ? ______________________________________________
   ຄ. ເວົ້າພາສາໃດ? ___________________________________________________
2. ກ. ແມ່ນໃຜໃຊ້ຄົນມາຊວນໃຫ້ໂປໂລເທດ? ___________________________________
   ຂ. ເປັນຫຍັງເຂົາຈຶ່ງ ຊວນໃຫ້ໂປໂລເທດ? ___________________________________
3. ຄຳເທດສະໜານັ້ນ ເຫັນໃນພະຄຳພີບົດຂໍ້ໃດ?
   (ເປີດພະຄຳພີທີ່ທ່ານໝາຍໄວ້ກໍ່ໄດ້.) ________________________________________
4. ໂປໂລເທດສະໜາໄປແລ້ວ ເຫັນວ່າມີຄົນຈາກສອງພວກໃດຮັບເຊື່ອ?
   _______________________________ ແລະ _________________________________
5. ຕາມຄຳເທດສະໜາຂອງໂປໂລນັ້ນ ຂ່າວປະເສີດມີຈຸດສຳຄັນສອງປະການໃດ?
   _______________________________ ແລະ _________________________________
6. ກ. ໃນເມື່ອເວລານັ້ນ ພະທຳຂອງພະເຈົ້າໄດ້ແຜ່ໄປເຖິງບ່ອນໃດ? __________________
   ຂ. ແຕ່ອາດຈະເປັນພີ່ນ້ອງຄຣິດສະຕຽນທີ່ປະກາດທົ່ວຂອບເຂດນັ້ນ ເພາະໃນເວລານັ້ນສຸຂະພາບຂອງໂປໂລ ເປັນຢ່າງໃດ? ________________________________________

## ເສັງປາຍບົດທີ 9

1. ໃນແຂວງຄາລາເຕຍ ເມືອງໃດທີ່ຄົນງ່ອຍດີແລ້ວຍ່າງໄປໄດ້? ____________________
2. ປະຊາຊົນເຫັນການອັດສະຈັນນັ້ນ ແລ້ວຖືວ່າໂປໂລກັບບາລະນາບາເປັນຫຍັງ? ________
3. ກ. ປະຊາຊົນຢາກບູຊາຫຍັງໃຫ້? ________________________________________
   ຂ. ໂປໂລກັບບາລະນາບາຕອບວ່າຢ່າງໃດ? __________________________________
4. ຕໍ່ໄປເຂົ້າຄຽດແລ້ວມີສັດຕູຈະມາເຮັດຫຍັງໃສ່ໂປໂລ? _______________________
5. ກ. ຜູ້ທີ່ມາສ້າງຄວາມວຸ້ນວາຍມາຈາກສອງເມືອງໃດ?
   _____________________________ ແລະ ____________________________
   ຂ. ເຂົາຖືສາສະໜາໃດ? ____________________________________________
   ຄ. ພວກນັ້ນເຄີຍຕໍ່ຕ້ານໂປໂລໃນແຂວງຄາລາເຕຍ ເມືອງອື່ນ ໆ ກ່ອນບໍ່? ____________
6. ຊາຍໜຸ່ມທີ່ຮັບເຊື່ອໃນເມືອງລີຊະທາຊື່ຫຍັງ? _________________________________
7. ໂປໂລຕັ້ງຄຼິດສະຕະຈັກໃນແຂວງຄາລາເຕຍ 4 ບ່ອນໃດ? (ເປີດເບິ່ງພະຄຳພີທີ່ທ່ານໝາຍໄວ້ແລ້ວກໍໄດ້) ____________ ____________ ____________ ແລະ ____________

*(ບໍ່ມີເສັງຫຼັງປະຊຸມບົດທີ່ 9)*

## ເສັງຕົ້ນບົດທີ 10

1. ກ. ຫຼັງຈາກໄປປະກາດໃນແຂວງຄາລາເຕຍ ໂປໂລແລະບາລະນາບາກັບມາເຖິງຄຼິດສະຕະຈັກໃດ?
   ____________________________________________________________
   ຂ. ເຂົາເດີນທາງໄປໂດຍວິທີໃດ? ______________________________________
2. ກ. ມີສາວົກຄົນໃດມາຢ້ຽມເຂົາໃນອັນຕີໂອເຂຍ? ____________________________
   ຂ. ເປໂຕຫຼົງຜິດຢ່າງໃດ? ____________________________________________
3. ກ. ຜູ້ທີ່ນຳເປໂຕຫຼົງຜິດຢ່າງນັ້ນມາຈາກໃສ? ___________________________________
   ຂ. ເຂົາຕົວະວ່າແມ່ນໃຜໃຊ້ເຂົາມາ? _____________________________________
4. ມີຜູ້ປະກາດພະທຳອີກຄົນໃດທີ່ຖືກຫຼອກລວງພ້ອມກັບເປໂຕ? ___________________
5. ຜູ້ທີສອນບໍ່ຈິງຈາກເຢລູຊາເລັມ ສອນວ່າຄົນຕ່າງຊາດຕ້ອງເຮັດຢ່າງໃດກ່ອນຈະໄດ້ລອດ? (ຕື່ມຄວາມທີຂາດ)
   ກ. ຕ້ອງຖື ___________________________________________________
   ຂ. ຕ້ອງຮັບ __________________________________________________
6. ຍັງເຫຼືອແຕ່ຜູ້ດຽວທີ່ບໍ່ຖືກຫຼອກລວງຄືໃຜ? _________________________________

## ເສັງປາຍບົດທີ 10

*ໃຫ້ທ່ານໝາຍ √ ໄວ້ຂ້າງທຸກຂໍ້ຕໍ່ໄປນີ້ທີ່ຖືກກັບ ຄລຕ 2:11-21.*

1. ___ ພະຄຳຂອງພະເຈົ້າສອນຢ່າງໃດ ເຮົາຄວນດຳເນີນຊີວິດໄປຕາມ.
2. ___ ບໍ່ຄວນມີສິ່ງກີດກັ້ນລະຫວ່າງຄຣິດສະຕຽນທີ່ມີທຳນຽມແຕ່ກຕ່າງກັນໄປ.
3. ___ ຄວນພະຍາຍາມແກ່ບັນຫາທີ່ແຍກຄຣິດສະຕຽນອອກຈາກກັນແລະກັນ.
4. ___ ຖ້າເຫັນພີ່ນ້ອງຄຣິດສະຕຽນຫຼົງຜິດປະການໃດ ເຮົາຄວນຕັກເຕືອນເພິ່ນໃນຄວາມຮັກ.
5. ___ ເຮົາຄວນຂາຍຊັບສິ່ງຂອງເຮົາແຈກໃຫ້ຄົນທຸກຍາກ.
6. ___ ບໍ່ຄວນບັງຄັບໃຫ້ຄົນໃດເຮັດພິທີໃດໜຶ່ງ.
7. ___ ເຫັນນັກເທດມາຈາກທີ່ອື່ນ ເຮົາຄວນກວດເບິ່ງວ່າຄຳເທດສະໜານັ້ນຖືກກັບພະຄຳພີຫຼືບໍ່.
8. ___ ຖ້າຜູ້ໃດເປັນອາຈານ ເຮົາຈະຖືວ່າຄຳສອນຂອງເພິ່ນຖືກຕ້ອງເຖິງອາດຈະຜິດພະຄຳພີກໍ່ຕາມ.
9. ___ ຖ້າເຮົາຫຼົງຜິດປະການໃດ ຄວນຖ່ອມຕົວຂໍອະໄພ.

*(ບໍ່ມີເສັງຫຼັງຈາກປະຊຸມບົດທີ 10)*

## ເສັງຕົ້ນບົດທີ 11

1. ໂປໂລຍົກເມຍຂອງອັບລາຮາມທັງສອງຄົນມາປຽບທຽບກັບພະສັນຍາຂອງພະເຈົ້າ.
   ກ. ເມຍຄົນໃດ ຊາລາ ຫຼື ຮາກາ ປຽບທຽບກັບການເປັນຂ້ອຍຂ້າຂອງພະບັນຍັດ? ________
   ຂ. ເມຍຄົນໃດປຽບທຽບກັບຄວາມອິສະລະ? ________________________________
2. ແມ່ນຄົນໃດໃນພະຄຳພີເດີມທີ່ໄດ້ລອດໂດຍຄວາມເຊື່ອໃນພະສັນຍາ? ______________
3. ພະສັນຍານັ້ນເພື່ອຊາດຢິວສະເພາະຫຼືເພື່ອຄົນຕ່າງຊາດດ້ວຍ? ____________________
4. ກ. ພະບັນຍັດນຳໃຫ້ເປັນຂ້ອຍຂ້າຫຼືເປັນອິສະລະ? ______________________________
   ຂ. ຄວາມເຊື່ອເດ້? ____________________________________________________

## ເສັງປາຍບົດທີ 11

1. ໃນບົດນີ້ເຮົາຮຽນເລື່ອງ ____________ ທີ່ພະເຈົ້າສັນຍາໃຫ້ອັບລາຮາມ. (ຕື່ມຄວາມຂາດ.)
2. ມໍລະດົກນັ້ນ ມີຄວາມໝາຍສອງລະດັບ ຄືໃນໂລກນີ້ພວກລູກຫຼານຂອງອັບລາຮາມ ຈະຮັບປະເທດການາອານ. ອີກລະດັບໜຶ່ງອ້າງເຖິງເມືອງໃດ? __________________________
3. ກ. ເຊື້ອສາຍຂອງອັບລາຮາມທີ່ຈະມານັ້ນຄືໃຜ? ________________________________
   ຂ. ແມ່ນພວກຄົນໃດອີກທີ່ຈະຮັບມໍລະດົກພ້ອມກັບພະເຢຊູ? ______________________
4. ໃນ ຄລຕ ບົດ 3 ແລະ 4 ເຫັນຄຳວ່າ ມໍລະດົກ 5 ເທື່ອ. ເຫັນໃນຂໍ້ໃດແດ່? (ເປີດເບິ່ງໃນພະຄຳພີທີ່ທ່ານໝາຍໄວ້ແລ້ວກໍ່ໄດ້)

   ຄລຕ 3: _____  ຄລຕ 3: _____  ຄລຕ 4: _____  ຄລຕ 4: _____  ຄລຕ 4: ___

5. ອັບລາຮາມມີສອງເມຍຄື ຮາກາ ແລະ ຊາລາ.

ກ. ເມຍໃດໝາຍເຖິງພະບັນຍັດທີ່ໃຫ້ໂມເຊ? ______________________________

ຂ. ເມຍໃດສະແດງເຖິງຄວາມເຊື່ອຂອງອັບລາຮາມ? __________________________

6. ລູກຂອງເມຍໃດຈະຮັບມໍລະດົກ? ____________________________________

7. ທັງຜູ້ສອນບໍ່ຈິງໃນຄາລາເຕຍ ແລະລູກຂອງຮາກາມີຜົນຮັບບໍ່ດີ. ພວກຜູ້ມາສອນບໍ່ຈິງຢູ່ໃນທຳນອງດຽວກັນ ກັບລູກຂອງຂ້ອຍຂ້ານັ້ນ.

ກ. ໃນລູກທັງສອງຄົນນັ້ນແມ່ນລູກໃດທີ່ບໍ່ຮັບມໍລະດົກ? ______________________

ຂ. ລູກຄົນໃດທີ່ຖືກຂັບໄລ່ອອກ? ______________________________________

## ເສັ້ງຫຼັງປະຊຸມບົດທີ 11

*(ເປີດພະຄຳພີໄດ້)*

1. ໃຫ້ສະຫລູບເລື່ອງໃນ ຄລຕ 1:1-10. __________________________________
2. ໃຫ້ສະຫລູບເລື່ອງໃນ ຄລຕ 3:1-5. ___________________________________
3. ໃຫ້ສະຫລູບເລື່ອງໃນ ຄລຕ 4:8-20. __________________________________
4. ໃຫ້ສະຫລູບເລື່ອງໃນ ຄລຕ 5:15. ____________________________________
5. ໃຫ້ສະຫລູບເລື່ອງໃນ ຄລຕ 6:18-28. _________________________________

## ເສັ້ງຕົ້ນບົດທີ 12

1. ສ່ວນສຸດທ້າຍໃນພະທຳຄາລາເຕຍ ເລີ່ມຕົ້ນໂດຍຄຳສັ່ງຈາກໂປໂລໃຫ້ຕັ້ງໝັ້ນຄົງໃນຫຍັງ?

   ______________________________________________________________

2. ເລື່ອງຄວາມເສລີພາບ ເຮົາຕ້ອງລະວັງສອງປະການ (ຕື່ມຄວາມຂາດ)

ກ. ຢ່າໃຫ້ ________________ ຄວາມເສລີພາບ

ຂ. ຢ່າໃຊ້ຄວາມເສລີພາບໃນທາງ ____________________________________

3. ຖ້າເຮົາປ່ອຍຕົວເຮັດໄປຕາມທຳມະດາໂລກ ເຮົາຜິດຢ່າງໃດ? (ເລືອກ)

ກ. ປະຖິ້ມຄວາມເສລີພາບ

ຂ. ໃຊ້ຄວາມເສລີພາບໃນທາງບໍ່ຖືກ

4. ກ. ລູກຂອງອັບລາຮາມທີ່ປຽບທຽບກັບພະບັນຍັດຂົ່ມເຫັງໃຜ? __________________

ຂ. ຜູ້ທີ່ມາສອນໃຫ້ຖືພະບັນຍັດຂົ່ມເຫັງໃຜ? _________________________________

5. ກ. ເຮົາຄວນມອບສິດປົກຄອງຊີວິດກັບໃຜ? _________________________________

ຂ. ຢ່າໃຫ້ເຮົາປ່ອຍຕົວໄປຕາມຫຍັງ? ______________________________________

6. ພະເຢຊູບອກວ່າ "ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ" ແຕ່ຊິດສະຕຽນຢູ່ໃນຄາລາເຕຍ ________ ກັນແລະ __________ ເນື້ອກັນ. ຢ້ານວ່າຈະພາກັນຈິບຫາຍໄປ. (ຕື່ມຄວາມຂາດ)

# ເສັ້ງປາຍບົດທີ 12

1. ກ. ທີ່ໂປໂລເທດສະໜາໃນຄາລາເຕຍ ໃນ ກຈກ ບົດທີ່ 13. ເມື່ອເທດສະໜາແລ້ວເພິ່ນ
   ຕັກເຕືອນໃຫ້ເຂົາຕັ້ງໝັ້ນຄົງໃນຫຍັງ? ________________________________
   ຂ. ເຫັນໃນ ກຈກ ບົດທີ 13 ຂໍ້ໃດ? ________________________________
2. ກ. ແຕ່ພວກຄາລາເຕຍຕັ້ງໝັ້ນຄົງບໍ່? ________________________________
   ຂ. ຂໍ້ໃດໃນ ຄລຕ ບົດ 1 ບອກວ່າເຂົາປະຖິ້ມພະອົງ? ________________________
   ຄ. ຂໍ້ໃດໃນບົດທີ 5 ບອກວ່າເຂົາຫລຸດອອກຈາກພະຄຸນ? ____________________
3. ກ. ຕະຫຼອດໃນພະທຳຄາລາເຕຍ ໂປໂລເນັ້ນເລື່ອງລັກສະນະໃດຂອງພະເຈົ້າ? ________
   ຂ. ເຫັນຄຳ "ພະຄຸນ" ໃນຂໍ້ໃດກ່ອນ? ________________________________
   ຄ. ແລະໃນຂໍ້ໃດສຸດທ້າຍ? ________________________________
4. ກ. ໂປໂລເວົ້າຄຳພະຍານເລື່ອງຊີວິດຂອງເພິ່ນເອງດັ່ງຕໍ່ໄປນີ້ "ພະເຈົ້າໄດ້ຊົງໂຜດເລືອກເຮົາ
   ໄວ້ຕັ້ງແຕ່ຢູ່ໃນທ້ອງຂອງມານດາ ແລະໃດ້ຊົງໂຜດເອີ້ນເຮົາດ້ວຍ ________________
   ມາຮັບໃຊ້ພະອົງ..." (ຕື່ມຄວາມຂາດ)
   ຂ. ເລື່ອງນັ້ນເຫັນໃນບົດຂໍ້ໃດ? ________________________________
   ຄ. ແມ່ນສາວົກຂອງພະເຢຊູ 3 ຄົນໃດທີ່ສັງເກດເຫັນພະຄຸນທີ່ພະອົງປະທານແກ່ໂປໂລ?
   ________________ ________________ ແລະ ________________
   ງ. ເຫັນໃນບົດໃດຂໍ້ໃດ? ________________________________
   ຈ. ໂປໂລບອກວ່າ "ເຮົາບໍ່ໄດ້ເຮັດໃຫ້ ______________ ຂອງພະເຈົ້າເປັນໂມຄະ."
   (ຕື່ມຄວາມທີ່ຂາດ)
   ສ. ຄວາມນັ້ນເຫັນໃນຄາລາເຕຍບົດໃດຂໍ້ໃດ? ________________________________
5. ຄຳວ່າ "ພະຄຸນຂອງພະເຈົ້າ" ອ້າງເຖິງພະກະລຸນາເຖິງຂະນາດໃດ? ________________
6. ສ່ວນຄົນທີ່ຮູ້ເລື່ອງພະຄຸນຂອງພະເຈົ້າແລ້ວ ເຂົາຕອບໄດ້ສອງຢ່າງ.
   ກ. ໂປໂລແລະບາລະນາບາເຕືອນໃຫ້ພີ່ນ້ອງຖືພະຄຸນຂອງພະເຈົ້າຢ່າງໃດ? __________
   ຂ. ເຫັນໃນບົດໃດຂໍ້ໃດ? ________________________________
   ຄ. ແຕ່ມີອີກພວກນຶ່ງທີ່ຫລຸດອອກຈາກຫຍັງ? ________________________________
   ງ. ເລື່ອງນັ້ນເຫັນໃນບົດໃດຂໍ້ໃດ? ________________________________
7. ໃນຄຳອຸປະມາເລື່ອງລູກທີ່ເສຍ ຜູ້ຮັບພະຄຸນຈາກພໍ່ເປັນອ້າຍ ຫຼື ເປັນນ້ອງ? __________

# ເສັ້ງຫຼັງປະຊຸມບົດທີ 12

*(ເປີດພະຄຳພີໄດ້)*

1. ກ. ແມ່ນສອງຝ່າຍໃດທີ່ຕໍ່ສູ້ກັນໃນຊີວິດຂອງເຮົາ? (ຕາມຄຳຖາມທີ 2) _______________
   ຂ. ເລື່ອງນັ້ນເຫັນໃນ ຄລຕ ບົດທີ 5 ຂໍ້ໃດ? ___________________________________
2. ໂປໂລຊຽນລາຍຊື່ບາບທີ່ເປັນການງານຂອງມະນຸດທຳມະດາ. ເພີ່ນແຍກເປັນ 4 ຈຳພວກ. (ຕາມຄຳຖາມ ທີ 5)
   ກ. ໃຫ້ທ່ານຈົດບາບຈາກດ້ານເພດໜຶ່ງປະການ ________________________________
   ຂ. ໃຫ້ຈົດບາບດ້ານສາສະໜາໜຶ່ງປະການ ___________________________________
   ຄ. ໃຫ້ຈົດບາບດ້ານສັງຄົມມະນຸດໜຶ່ງປະການ ________________________________
   ງ. ໃຫ້ຈົດບາບດ້ານເຄື່ອງກິນໜຶ່ງປະການ ___________________________________
3. ກ. ໃນຈຳພວກໃດທີ່ໂປໂລຈົດລາຍຊື່ຍາວທີ່ສຸດ? ________________________________
   ຂ. ສັງຄົມມະນຸດນັ້ນເປັນບັນຫາໃຫຍ່ໃນຄຼິດສະຕະຈັກໃດ? _______________________
   ຄ. ລາຍຊື່ນັ້ນເຫັນໃນຄາລາເຕຍບົດໃດຂໍ້ໃດ? ________________________________
4. ໂປໂລກໍ່ຈົດຊື່ຜົນຂອງພະວິນຍານອີກດ້ວຍ. ໃນວັນດຽວທີ່ພະເຢຊູສິ້ນພະຊົນເຫັນຜົນຂອງພະວິນຍານ ໃນການກະທຳຂອງພະເຢຊູ. ໃຫ້ຈົດຜົນຂອງພະວິນຍານທີ່ເຫັນໃນພະເຢຊູແຕ່ 3 ປະການແລ້ວຊຽນບົດ ແລະຂໍ້ອີກດ້ວຍ (ຕາມຄຳຖາມ 9).

| ບົດ ແລະ ຂໍ້: | ຜົນທີ່ເຫັນໃນພະເຢຊູ: |
|---|---|
| ____________________ | __________________________________ |
| ____________________ | __________________________________ |
| ____________________ | __________________________________ |

5. ເລື່ອງຜົນຂອງພະວິນຍານທີ່ໂປໂລຍົກຊື່ມາ ເຫັນໃນພະທຳ ຄລຕ ບົດທີ 5 ຂໍ້ໃດ?
   ______________________________________________________________________
6. ກ. ເພື່ອຈະເອົາຊະນະໃນການຄຶງຕັນຫາມະນຸດໄວ້ທີ່ໄມ້ກາງແຂນ ເຮົາຕ້ອງເປີດຮັບການບຳລຸງ ຊີວິດຈາກໃຜ? ____________________________________________
   ຂ. ຕ້ອງປິດບໍ່ຮັບການບຳລຸງຕາມຫຍັງ? ____________________________________
   ຄ. ເລື່ອງນັ້ນເຫັນໃນ ຄລຕ ບົດ 5 ຂໍ້ໃດ? _____________________________________

## ເສັ້ງຕົ້ນບົດທີ 13

1. ກ່ຽວກັບຄຶດສະຕຽນທີ່ຖອຍຫຼັງໃນ ຄລຕ 3:15 ມີປະການໃດທີ່ສະແດງຢ່າງຄັກແນ່ຕໍ່ຕາຂອງ ພວກ ພີ່ນ້ອງຄາລາເຕຍນັ້ນ? ______________________________
2. ກ. ເຂົາຕັ້ງຕົ້ນໂດຍທາງຫຍັງ? ______________________________
   ຂ. ຖ້າເຂົາຟັງຄວາມຂອງຜູ້ສອນບໍ່ຈິງ ເຂົາຄິດຈະສຳເລັດລົງໂດຍທາງໃດ? __________
   ຄ. ໂປໂລກ່າວຫາເຂົາວ່າເປັນຄົນບໍ່ມີຄວາມຄິດ ແລະເປັນຄົນໂງ່ ເພາະຫຍັງ? _________
3. ກ່ຽວກັບຄຶດສະຕຽນທີ່ກັບຄືນມາໃນ ຄລຕ 6:1-5 ຄຶດສະຕຽນໃດຕໍ່ໄປນີ້ມີທ່າທີຖືກຕ້ອງຕໍ່ຄຶດ ສະຕຽນທີ່ ຫຼົງຜິດ. (ເລືອກ)
   ກ. ຜູ້ທີ່ຖືຕົວວ່າດີກ່ວາຜູ້ອື່ນ
   ຂ. ຜູ້ທີ່ຖ່ອມຕົວລົງຈຶ່ງຈະແນະນຳຜູ້ທີ່ຕົກບາບ.
   ຄ. ເຫັນເພິ່ນແບກພາລະໜັກ ດັ່ງນັ້ນເຮົາຈະພ້ອມໃຈຊ່ວຍເພິ່ນ.
   ງ. ເຖິງເພິ່ນຫຼົງຜິດກໍຕາມ ແຕ່ເຮົາຍັງຈະສຸພາບກັບເພິ່ນ.
4. ກ. ຂໍ້ໃດບອກວ່າເຮົາຈຶ່ງຊ່ວຍຮັບພາລະອັນໜັກຂອງກັນແລະກັນ. (ເລືອກ)
   ຄລຕ 6:2 ຄລຕ 6:5
   ຂ. ຂໍ້ໃດບອກວ່າເຮົາຕ້ອງຮັບຜິດຊອບຕໍ່ພາລະຂອງຕົນເອງ? ____________________

## ເສັ້ງປາຍບົດທີ 13

1. ໃຫ້ອານ ຄລຕ 6:6
   ກ. ສ່ວນຜູ້ທີ່ຮັບພະທຳຄຳສອນຈຶ່ງເຮັດຫຍັງ? ______________________________
   ຂ. ແບ່ງໃຫ້ແກ່ໃຜ? ______________________________
2. ກ. ຕາມໃນຄາລາເຕຍ 6:8 ຜູ້ທີ່ຫວ່ານຕາມຕັນຫາຂອງທຳມະດາມະນຸດ ຈະເກັບກ່ຽວຫຍັງ?
   ______________________________
   ຂ. ຜູ້ທີ່ຫວ່ານຕາມພະວິນຍານ ຈະເກັບກ່ຽວຫຍັງ? ______________________________
3. ໃນຄລຕ 6:7 ແມ່ນໃຜທີ່ເຮົາຫຼອກລວງບໍ່ໄດ້? ______________________________
4. ໃນຄລຕ 6:9 ຫ້າມບໍ່ໃຫ້ເມື່ອຍລ້າ ແລະບໍ່ໃຫ້ທໍ້ຖອຍໃນການໃດ? ________________
5. ຖ້າຢ່າງນັ້ນ ເຮົາຈະເກັບກ່ຽວຜົນຕາມເວລາໃດ? ______________________________
6. ໃນຄລຕ 6:10 ເຮົາຈຶ່ງເຮັດການດີຕໍ່ຄົນທັງປວງຕາມຫຍັງ? ____________________
7. ຄວນເຮັດດີຕໍ່ຄົນທັງປວງແລະເປັນຕົ້ນຕໍ່ໃຜ? ______________________________

## ເສັ້ງທັງປະຊຸມບົດທີ 13

*ໃຫ້ຍົກຄຳຕອບນີ້ຈາກ ຄລຕ 6:11-18*

1. ກ. ຜູ້ທີ່ສອນບໍ່ຈິງບໍ່ຢາກຖືກຫຍັງເພາະເຫດໄມ້ກາງແຂນຂອງພະຄຣິດ? ________________
   ຂ. ເຫັນໃນຂໍ້ໃດ? ________________
   ຄ. ໂປໂລບໍ່ຕ້ອງການອວດນອກຈາກເລື່ອງຫຍັງ? ________________
   ງ. ໃນຂໍ້ໃດ? ________________
2. ກ. ຜູ້ທີ່ມາສອນບໍ່ຈິງ ຈະໃຫ້ຄຣິດສະຕຽນຕ່າງຊາດຮັບພິທີຕັດ ເພື່ອເອົາໃຈໃຜ? __________
   ຂ. ເຂົາຢາກເອົາໃຈຄົນຢິວນັ້ນເພື່ອຈະບໍ່ຖືກຫຍັງ? ________________
3. ກ. ໂປໂລມີຮອຍຕາປະທັບຂອງໃຜໃນເນື້ອກາຍ? ________________
   ຂ. ເຫັນໃນຂໍ້ໃດ? ________________
   ຄ. ເພິ່ນຖືກຮອຍເຫຼົ່ານັ້ນໃນເມືອງໃດ? ________________
   ງ. ເຂົາເຮັດຫຍັງໃນເມືອງລີຊະທາ ທີ່ໂປໂລຈຶ່ງມີຮອຍຢ່າງນັ້ນ? ________________

## ເສັ້ງຕົ້ນບົດທີ 14

1. ກ. ຜູ້ທີ່ສອນບໍ່ຈິງຈາກກຸງເຢລູຊາເລັມ ສອນວ່າຕ້ອງເຮັດຢ່າງໃດຈຶ່ງຈະໄດ້ລອດ?
   ________________ ແລະ ________________
   ຂ. ເຂົາຂຶ້ນກັບສາສະໜາຢິວພວກໃດ? ________________
2. ເປັນຫຍັງຄຣິດສະຕະຈັກໃນອັນຕີໂອເຂຍໃຊ້ ໂປໂລແລະບາລະນາບາ ໄປກຸງເຢລູຊາເລັມເທື່ອທີສອງ? ________________
3. ແມ່ນສາວົກຄົນໃດ ທີ່ເຫັນພ້ອມກັບໂປໂລແລະບາລະນາບາວ່າຄຣິດສະຕຽນຕ່າງຊາດ ບໍ່ຕ້ອງເຂົ້າ ສາສະໜາຢິວ? ________________ ແລະ ________________
4. ດັ່ງນັ້ນແມ່ນຄວາມຈິງທີ່ຢາໂກໂບນັ້ນ ໃຊ້ຜູ້ສອນບໍ່ຈິງເລື່ອງພິທີຕັດຫຼືບໍ່? ________________
5. ສຸດທ້າຍການຮ່ວມກັນໃນກຸງເຢລູຊາເລັມນັ້ນຕັດສິນໃຈວ່າ ຄຣິດສະຕຽນຕ່າງຊາດຈະຕ້ອງຮັບພິທີຕັດຫຼືບໍ່? ________________

# ເສັງປາຍບົດທີ 14

1. ໃຫ້ສະຫລຸບເລື່ອງການເດີນທາງໄປຕ່າງປະເທດຂອງໂປໂລ
   ກ. ສາມເທື່ອເພິ່ນອອກໄປເພື່ອເຮັດຫຍັງ? ______________________
   ຂ. ໄປແຂວງໃດເທື່ອທຳອິດ? ______________________
   ຄ. ເທື່ອທີ່ສອງໄປໃສ? ______________ ແລະ ______________
   ງ. ເທື່ອທີສາມເດ່? ______________________
   ຈ. ເທື່ອສຸດທາຍໄປໃສ? ______________________
   ສ. ໃນສະພາບໃດ? ______________________
2. ກ. ໂປໂລອອກໄປປະກາດເທື່ອໃດຈຶ່ງຕັ້ງຄຼິດສະຕະຈັກໃນເມືອງເອເຟໂຊ? ________
   ຂ. ເທື່ອໃດທີ່ຕັ້ງຄຼິດສະຕະຈັກໃນເມືອງໂກລິນໂທ? ______________________
   ຄ. ເທື່ອໃດໃນເມືອງລີຊະທາ? ______________________
   ງ. ເທື່ອໃດໃນເມືອງເທຊະໂລນິກ? ______________________
   ຈ. ເທື່ອໃດໃນເມືອງຟີລິບປອຍ? ______________________
   ສ. ເທື່ອໃດໃນອັນຕີໂອເຂຍໃນແຂວງປີຊີເດຍ? ______________________
3. ໃຫ້ເບິ່ງແຜນທີ່ຕໍ່ໄປນີ້:
   ກ. ເລກໃດໝາຍເຖິງ ຄາລາເຕຽ? ______________________
   ຂ. ເລກໃດໝາຍເຖິງ ມາເກໂດເນຍ? ______________________
   ຄ. ເລກໃດໝາຍເຖິງ ອະຂາຢາ? ______________________
   ວ. ເລກໃດແຂວງ ອາເຊຍ? ______________________

